# ມິຊຊາອາທິດທີ 33 ກຳນົດທຳມະດາ ປີ B
# ວັນອາທິດທີ 17 ພະຈິກ 2018



**ພຣະວໍລະສານໂດຍນັກບຸນມາກໂກ 13, 24-32**

ໃນເວລານັ້ນ, ເມື່ອຄວາມທຸກເວດທະນາອັນໃຫຍ່ນັ້ນຜ່ານພົ້ນໄປແລ້ວ ຕາເວັນກໍຈະມືດມົວລົງແລະເດືອນຈະບໍ່ສ່ອງແສງອີກ. ດວງດາວຕ່າງໆຈະຕົກລົງຈາກຟ້າແລະອະນຸພາບໃນທ້ອງຟ້າຈະສັ່ນສະເທືອນ. ເວລານັ້ນຈະເຫັນບຸດມະນຸດສະເດັດກັບມາໃນໝູ່ເມກພ້ອມດ້ວຍຣິດທານຸພາບແລະສີມຸງຄຸນອັນຍິ່ງໃຫຍ່. ພຣະອົງຈະໃຊ້ພວກເທວະດາໄປຮຽກໂຮມເອົາພວກເລືອກສັນທັງຫລາຍຈາກສີ່ທິດຕັ້ງແຕ່ສຸດໂລກຈົນເຖິງສຸດຟ້າຂຽວ.

ພວກເຈົ້າຈົ່ງເອົາຄວາມປຽບເລື່ອງກົກໝາກເດື່ອມາເປັນບົດຮຽນຄື ເມື່ອເຫັນກິ່ງກ້ານມັນອອ່ນແລະປົ່ງໃບ, ພວກເຈົ້າກໍຮູ້ວ່າລະດູຮ້ອນໃກ້ເຂົ້າມາແລ້ວ. ກໍດັ່ງດຽວກັນ, ເມື່ອພວກເຈົ້າເຫັນສິ່ງເຫລົ່ານີ້ເກີດຂຶ້ນມາ ກໍຈົ່ງຮູ້ໄວ້ເຖີດວ່າບຸດມະນຸດສະເດັດມາໃກ້ເຖິງປະຕູແລ້ວ.

ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ຄົນເຊັ່ນນີ້ຈະບໍ່ຜ່ານພົ້ນໄປກ່ອນເຫດການເຫລົ່ານີ້ຈະອຸບັດຂຶ້ນ. ຟ້າດິນຈະຜ່ານພົ້ນໄປ, ແຕ່ວາຈາຂອງເຮົາຈະບໍ່ຜ່ານພົ້ນໄປໄດ້ເລີຍ.

ສ່ວນເລື່ອງວັນໃດແລະເວລາໃດນັ້ນບໍ່ມີໃຜຮູ້ໄດ້ແມ່ນແຕ່ພວກເທວະດາໃນສະຫວັນ, ແມ່ນແຕ່ພຣະບຸດເອງກໍບໍ່ຮູ້. ມີແຕ່ພຣະບິດາເຈົ້າຜູ້ດຽວເທົ່ານັ້ນຮູ້ຈັກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

ບົດແບ່ງປັນ: ມກ **13, 24-32**

ການເດີນທາງຂອງພວກເຮົາຮ່ວມກັບພຣະເຢຊູເຈົ້າແຕ່ລະວັນແລະແຕ່ລະອາທິດ. ໃນທີ່ສຸດພວກເຮົາກໍມາຮອດຕອນທ້າຍຂອງປີພິທີກຳອັນເປັນຊ່ວງເວລາທີ່ພວກເຮົາພ້ອມກັບພຣະກຣິສຕະຈັກເບິ່ງຄືນຊີວິດການກະທຳຂອງພວກເຮົາໃນປີໜຶ່ງທີ່ຜ່ານມາ. ແນ່ນອນສິ່ງທີ່ພວກເຮົາແນມເຫັນກ່ອນອື່ນໝົດຄືຊ່ວງເວລາແຫ່ງຄວາມຊື່ນຊົມຍິນດີ, ຊ່ວງເວລາແຫ່ງຄວາມສຳເລັດຕ່າງໆໃນຊີວິດຂອງພວກເຮົາ. ແຕ່ສິ່ງທີ່ພວກເຮົາຕ້ອງກ້າທີ່ຈະເບິ່ງຄືຊ່ວງເວລາແຫ່ງການທົດສອບ, ແຫ່ງຄວາມສິ້ນຫວັງ, ແຫ່ງຄວາມຜິດພາດຕ່າງໆໃນຊີວິດຂອງພວກເຮົາ. ເພື່ອຫຍັງ? ເພື່ອພວກເຮົາຈະໄດ້ພ້ອມກັບພຣະເຢຊູເຈົ້າດັດແປງແກ້ໄຂສິ່ງທີ່ຍັງບໍ່ທັນຈະແຈ້ງ, ຍັງບໍ່ທັນຊື່ກົງ, ຍັງບໍ່ທັນແທດເໝາະກັບວາຈາຂອງພຣະເຈົ້າໃນຊີວິດຂອງພວກເຮົາ. ແລະເປັນຕົ້ນ, ເພື່ອພວກເຮົາຈະໄດ້ຕຽມພ້ອມທັງກາຍແລະໃຈເພື່ອຕ້ອນຮັບການສະເດັດມາຂອງພຣະເຢຊູເຈົ້າ.

ພຣະອົງອາດຈະມາພົບພວກເຮົາໃນເວລານີ້, ໃນທີ່ນີ້, ໃນວັນນີ້ ຫລືໃນຍາມທີ່ພວກເຮົາບໍ່ຮູ້ຈັກ. ເພາະບໍ່ມີໃຜສາມາດບອກໃຫ້ພວກເຮົາຮູ້ລ່ວງໜ້າໄດ້ເຖິງວັນເວລາແຫ່ງການສະເດັດກັບມາໃໝ່ຂອງອົງພຣະເຢຊູກຣິສໂຕເຈົ້າ. ແຕ່ສິ່ງທີ່ພວກເຮົາທຳໄດ້ຄືການກະກຽມຊີວິດຈິດໃຈຂອງພວກເຮົາໃຫ້ພ້ອມເພື່ອຈະໄປຕ້ອນຮັບພຣະອົງ.

ເຮັດແນວໃດພວກເຮົາຈຶ່ງມີຄວາມຕື່ນຕົວແລະກະຕືລືລົ້ນໃນການກະກຽມຊີວິດຂອງພວກເຮົາ? ພວກເຮົາຕ້ອງຕື່ນເຝົ້າຢູ່ສະເໝີ. ການຕື່ນເຝົ້ານີ້ບໍ່ໝາຍຄວາມວ່າພວກເຮົາບໍ່ຫລັບບໍ່ນອນເພື່ອນັ່ງລໍຖ້າວັນທີ່ພຣະເຢຊູເຈົ້າຈະກັບມາ. ແຕ່ການຕື່ນເຝົ້ານີ້ຄືການຮູ້ຈັກສັງເກດ. ສັງເກດອັນໃດ? ສັງເກດວາຈາຂອງພຣະເຈົ້າທີ່ປາກເວົ້າແລະຕຸກເຕືອນພວກເຮົາໃຫ້ຫັນປ່ຽນຊີວິດທີ່ບໍ່ຖືກຕ້ອງແລ້ວຫັນມາເສັ້ນທາງອັນຊື່ກົງອັນແມ່ນເສັ້ນທາງທີ່ຈະນຳພວກເຮົາໄປຫາພຣະເຈົ້າ.

ໃນວັນອາທິດທ້າຍປີພິທີກຳນີ້, ພຣະກຣິສຕະຈັກກໍເຊີນຊວນພວກເຮົາຄິດຫາບັ້ນປາຍຊີວິດຈິດຂອງພວກເຮົາເຊັ່ນດຽວກັນ. ພວກເຮົາໄດ້ຕຽມພ້ອມຫຍັງແນ່ບໍ? ພວກເຮົາໄດ້ໃຫ້ຄວາມສຳຄັນກັບຊີວິດໜ້າຫລັງຄວາມຕາຍຂອງພວກເຮົາບໍ? ພວກເຮົາຈະມີຄວາມຍິນດີບໍເມື່ອເວລາພຣະເຢຊູເຈົ້າສະເດັດກັບມາອີກຄັ້ງໜຶ່ງ? ເມື່ອເວລາພຣະອົງຈະສະເດັດມາ ພວກເຮົາຈະເອົາຫຍັງໄປຕ້ອນຮັບພຣະອົງ?

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ຊ່ວຍປຸກລຸກຈິດໃຈຂອງພວກເຮົາໃຫ້ຕື່ນຂຶ້ນຈາກການມົວເມົານຳວັດຖຸຢູ່ໃນໂລກນີ້ ເພື່ອພວກເຮົາຈະໄດ້ຄິດຫາສິ່ງທີ່ເປັນນິລັນຄືການໄດ້ຢູ່ກັບພຣະເຈົ້າເມື່ອເວລາພຣະອົງຈະສະເດັດກັບມາອີກຄັ້ງໜຶ່ງໃນສີມຸງຄຸນຂອງພຣະອົງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ